ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

ກະຊວງການເງິນ                                        ເລກທີ 2144---/ກງ

ນະຄອນຫລວງວຽງຈັນ, ວັນທີ 09 AUG 2013

# ແຈ້ງການ

ເຖິງ: ບັນດາທ່ານ ຫົວໜ້າພະແນກການເງິນແຂວງ, ນະຄອນຫລວງ, ຫົວໜ້າພະແນກສ່ວຍສາອາກອນ, ຫົວໜ້າຄັງເງິນແຫ່ງຊາດປະຈຳແຂວງ, ນະຄອນຫລວງ, ຫົວໜ້າພາສີເຂດ ແລະ ຫົວໜ້າຫ້ອງຊັບສິນຂອງລັດທົ່ວປະເທດ.

ເລື່ອງ: ໃຫ້ໂຈະຊົ່ວຄາວ ການເພີ່ມຈຸດບໍລິການຈົດທະບຽນເອກະສານຢູ່ດ່ານສາກົນ ຂອງຂະແໜງຂະແໜງຄຸ້ມຄອງຊັບສິນຂອງລັດໃນທົ່ວປະເທດ.

-ອີງຕາມແຈ້ງການແນະນຳຂອງກະຊວງການເງິນ ສະບັບເລກທີ 1325/ກງ, ລົງວັນທີ 20/05/2013 ກ່ຽວກັບການເພີ່ມຈຸດບໍລິການຈົດທະບຽນເອກະສານ ຂອງຂະແໜງຄຸ້ມຄອງຊັບສິນຂອງລັດ.

ເພື່ອປັບປຸງຄືນກົນໄກການບໍລິການ ຢູ່ບັນດາດ່ານພາສີສາກົນ ໃນທົ່ວປະເທດ ໃຫ້ມີຄວາມຄ່ອງຕົວ, ວ່ອງໄວ ແລະ ທັນເຂົ້າເປັນລະບົບສາກົນເທື່ອລະກ້າວ ແນໃສ່ຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດບັນດາເງື່ອນໄຂຕ່າງໆ ທີ່ລາວເຮົາໄດ້ເຂົ້າເປັນສະມາຊິກອົງການການຄ້າໂລກ ແລະ ກະກຽມເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນໃນປີ 2015ນີ້, ລັດຖະມົນຕີວ່າການກະຊວງການເງິນ ອອກແຈ້ງການດັ່ງນີ້:

1. ໃຫ້ໂຈະຊົ່ວຄາວ ກ່ຽວກັບການຈັດຕັ້ງປະຕິບັດ ການເພີ່ມຈຸດບໍລິການຈົດທະບຽນເອກະສານຢູ່ບັນດາດ່ານສາກົນຕ່າງໆ ໃນຂອບເຂດທົ່ວປະເທດ ຈົນກວ່າຈະມີນິຕິກຳ ແລະ ກົນໄກໃໝ່ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ, ສຳລັບການບໍລິການຈົດທະບຽນເອກະສານ ຢູ່ບ່ອນອື່ນໆ ນອກຈາກດ່ານພາສີສາກົນຕ່າງໆ ແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດຢ່າງເປັນປົກກະຕິຄືຜ່ານມາ.

2. ໃຫ້ຄົ້ນຄ້ວາປັບປຸງຄືນກົນໄກການບໍລິການຈົດທະບຽນເອກະສານໃນຕໍ່ໜ້າ ໂດຍຫັນໄປສູ່ກົນໄກການບໍລິການຈົດທະບຽນດ້ວຍລະບົບເອເລັກໂຕຼນິກ ເພື່ອຮັບປະກັນການບໍລິການທີ່ວ່ອງໄວ ແລະ ໂປ່ງໃສ.

3. ມອບໃຫ້ຫ້ອງການກົມຄຸ້ມຄອງຊັບສິນຂອງລັດ, ຫ້ອງການພະແນກການເງິນແຂວງ, ນະຄອນຫລວງ ລຸ່ມລ່ອງ ພະນັກງານ ແລະ ເຮັດວຽກງານການເມືອງແນວຄິດ ຕໍ່ອ້າຍນ້ອງພະນັກງານທີ່ເຄີຍຮັບຜິດຊອບວຽກງານດັ່ງກ່າວເພື່ອຮັບຮູ້ ແລະ ເຂົ້າໃຈຕາມເນື້ອໃນແຈ້ງການສະບັບນີ້.

4. ຜ່ານການຈັດຕັ້ງປະຕິບັດ ຫາກພົບຄວາມຫຍຸ້ງຍາກ ໃຫ້ລາຍງານຫາກະຊວງການເງິນ ເພື່ອມີວິທີແກ້ໄຂໃຫ້ທັນເວລາ.

ດັ່ງນັ້ນ, ຈຶ່ງອອກແຈ້ງການແນະນຳສະບັບນີ້ ມາຍັງພາກສ່ວນກ່ຽວຂ້ອງຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີວ່າການກະຊວງການເງິນ,

ພູເພັດ ຄຳພູນວົງ